ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ພິທີປະກາດສ້າງຕັ້ງຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ 3 ຫຼ່ຽມຄຳ ແຂວງບໍ່ແກ້ວ




ໃນຕອນເຊົ້າວັນທີ 31 ສິງຫາ 2023 ນີ້, ທີ່ພາກເໜືອ ແຂວງບໍ່ແກ້ວ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີປະກາດສ້າງຕັ້ງຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ 3 ຫຼ່ຽມຄຳຂຶ້ນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ນ.ຂັນແກ້ວ ຫຼ້າມະນີເງິາ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ໃຫ້ກຽດເຂົ້າຮ່ວມໂດຍທ່ານ ເຄື່ອນເພັດ ວົງຈັນ ກຳມະການປະຈຳພັກແຂວງ, ຮອງເຈົ້າແຂວງ ແຂວງບໍ່ແກ້ວ, ຄະນະກົມ ທຫລ, ຄະນະສາຂາ ທຫລ ປະຈຳພາກ, ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.



ຈຸດປະສົງຂອງການສ້າງຕັ້ງຫ້ອງການຕົວແທນ ທຫລ ຂຶ້ນນີ້ ກໍເພື່ອຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍສະເພາະວຽກຈຸດສຸມທີ 4 ການສ້າງສະຖຽນລະພາບດ້ານເງິນຕາທະນາຄານແຫ່ງຊາດ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າຄວ້າປັບປຸງກົນໄກການຄຸ້ມຄອງວຽກງານການເງິນ-ເງິນຕາຢູ່ເຂດເສດຖະກິດພິເສດ 3 ຫຼ່ຽມຄຳ ແລະ ໄດ້ເຄື່ອນໄຫວເກັບກຳຂໍ້ມູນຢູ່ເຂດດັ່ງກ່າວ ເຫັນວ່າມີຄວາມຈຳເປັນໃນການສ້າງຕັ້ງຫ້ອງການຕົວແທນຢູ່ໃນເຂດເສດຖະກິດພິເສດ 3 ຫຼ່ຽມຄຳ ໂດຍອີງໃສ່ການເຫັນດີຈາກລັດຖະບານ ກໍໄດ້ດຳ ເນີນການຄົ້ນຄວ້າສ້າງຕັ້ງຫ້ອງການຕົວແທນ ທຫລ ປະຈຳເຂດເສດຖະກິດພິເສດ 3 ຫຼ່ຽມຄຳ ດັ່ງກ່າວ ຊຶ່ງຫ້ອງການຕົວແທນມີພາລະບົດບາດເປັນເສນາທິການໃຫ້ຄະນະສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກເໜືອໃນການຈັດຕັ້ງປະຕິ ບັດວຽກງານການບໍລິການ-ອຳນວຍຄວາມສະດວກ, ການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງດ້ານເງິນຕາ, ການຄຸ້ມຄອງສະຖາບັນການເງິນ ແລະ ລະບົບການຊຳລະ, ພ້ອມທັງເປັນໃຈກາງໃນການປະສານສົມທົບກັບອົງການປົກຄອງແຂວງ, ຜູ້ພັດທະນາເຂດ ແລະ ຜູ້ລົງທຶນຢູ່ໃນເຂດເສດຖະກິດພິເສດທີ່ຕົນຮັບຜິດຊອບ ເພື່ອເປັນການສົ່ງເສີມການລົງທຶນໃນເຂດເສດຖະກິດພິເສດ ດັ່ງກ່າວໃຫ້ມີຄວາມສະດວກ, ວ່ອງໄວ, ຖືກຕ້ອງ ແລະ ໂປ່ງໃສ ໂດຍມີການຄຸ້ມຄອງ ແລະ ບໍລິຫານຕາມກົນໄກບໍລິການຜ່ານປະຕູດຽວ.

**ຂ່າວ-ພາບ: ສົມພິດ ທຳມະວົງ**

*ຢູ່ເມືອງລາວໃຊ້ເງິນກີບລາວ*